**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.orgg**



# ວິໄສທັດໃນການປັບປຸງວຽກງານ ການສົ່ງເສີມ ກະສິກຳ ແລະປ່າໄມ້



ເອກະສານ ປະກອບການຝຶກອົບຮົມ 16:

CETDU
Central Extension Training and Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

## ປື້ມຄູ່ມືໃນແຕ່ລະເລື້ອງ

**I. ເອກະສານປະກອບການຝຶກອົບຮົມຄັ້ງທີ 1**

1. ລະບົບ ແລະຂະບວນການຝຶກ _ ສົ່ງເສີມວຽກງານກະສິກໍາ ແລະປ່າໄມ້
2. ວິທີການປະເມີນຄວາມຕ້ອງການຝຶກ_ສົ່ງເສີມ ຊາວກະສິກອນ (TNA _ Kiss)
3. ເຕັກນິກການພົວພັນ_ສື່ສານທີ່ມີປະສິດທິພາບ
4. ວິທີການເຮັດວຽກກັບຊາວກະສິກອນ
5. ຄູ່ມືພາກສະໜາມ ສໍາລັບນັກສົ່ງເສີມ

**II. ເອກະສານປະກອບການຝຶກອົບຮົມຄັ້ງທີ 2**

6. ວິທີການຝຶກອົບຮົມ_ສົ່ງເສີມຊາວກະສິກອນທີ່ມີປະສິດທິພາບ
7. ບາງເຕັກນິກການຝຶກອົບຮົມແບບມີສ່ວນຮ່ວມ
8. ການຝຶກອົບຮົມແບບມີສ່ວນຮ່ວມ
9. ເຕັກນິກພື້ນຖານສໍາລັບວິທະຍາກອນ
10. ການພັດທະນາກຸ່ມຜູ້ຜະລິດ
11. ການຄຸ້ມຄອງບໍລິຫານກຸ່ມທີ່ມີປະສິດທິພາບ
12. ການພັດທະນາຜູ້ນໍາຊຸມຊົນ ແລະວິຊາການບ້ານ
13. ການຕິດຕາມຊຸກຍູ້ຂະບວນການຝຶກ_ສົ່ງເສີມຊາວກະສິກອນ
14. ວິທີການ, ເຄື່ອງມືການວາງແຜນ ແລະປະຕິບັດແຜນການ

**III. ເອກະສານປະກອບການຝຶກອົບຮົມຄັ້ງທີ 3**

15. ພື້ນຖານການພັດທະນາ ແລະວິທີການຝຶກສົ່ງເສີມ ແບບມີສ່ວນຮ່ວມ
16. ວິໃສທັດໃນການປັບປຸງວຽກງານການສົ່ງເສີມ ກະສິກໍາ
17. ປັດໃຈມະນຸດ ແລະການພັດທະນາ ວຽກງານ ສົ່ງເສີມ ກປ
18. ການຈັດທັດສະນະສຶກສາ
19. ລະບົບ ພໍ່ປົກຄອງລູກ ຄວາມກະຕືລືລົ້ນ ແລະການມີສ່ວນຮ່ວມ



# ເອກະສານ 16: ວິໃສທັດໃນການ ປັບປຸງວຽກງານການສົ່ງເສີມ ກະສິກໍາ ແລະ ປ່າໄມ້

## ສາລະບານ

ວິໃສທັດໃນການປັບປຸງວຽກງານງານການ ສົ່ງເສີມກະສິກໍາ............2
ບົດບາດ ແລະໜ້າທີ່ຂອງການ ສົ່ງເສີມກະສິກໍາ ................................ 4
ຄວາມເຂົ້າໃຈຕໍ່ເປົ້າໝາຍ ແລະໜ້າທີ່ຂອງການສົ່ງເສີມ .................... 4
ໜ້າທີ່ສໍາຄັນຂອງການສົ່ງເສີມ ........................................................ 4
ອົງປະກອບສໍາຄັນຂອງວຽກງານສົ່ງເສີມ ທີ່ຄວນເອົາໃຈໃສ່ປັບປຸງ .. 7
ການກໍານົດຮູບແບບການ ສົ່າງເສີມ ກະສິກໍາ ................................ 14

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

# ວິໄສທັດໃນການ
# ປັບປຸງ ວຽກງານການສົ່ງເສີມ ກະສິກຳ ແລະ ປ່າໄມ້

## 1. ວິໄສທັດໃນການປັບປຸງວຽກງານການສົ່ງເສີມກະສິກຳ (Vision in Agriculture extension improvement)

ແນວທາງປ່ຽນແປງໃໝ່ຮອບດ້ານຂອງພັກ ແລະລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວ ປະຈຸບັນແມ່ນເນັ້ນໃສ່ເຮັດໃຫ້ແຂວງກາຍເປັນຫົວໜ່ວຍຍຸດທະສາດໃນການພັດທະນາເສດຖະກິດສັງຄົມຮອບດ້ານ, ເມືອງເປັນຫົວໜ່ວຍແຜນການ_ການເງິນ ແລະບ້ານເປັນຫົວໜ່ວຍການຈັດຕັ້ງປະຕິບັດ. ດັ່ງນັ້ນ, ການທີ່ຈະເຮັດໃຫ້ແນວທາງດັ່ງກ່າວຖືກຈັດຕັ້ງໃຫ້ປະກົດຜົນເປັນຈິງໄດ້ນັ້ນ, ມີຄວາມຈຳເປັນທີ່ທົ່ວພັກທົ່ວປວງຊົນ, ທຸກຂະແໜງການວິຊາສະເພາະ, ຕະຫຼອດຮອດປະຊາຊົນບັນດາເຜົ່າຕ້ອງໄດ້ຮ່ວມແຮງຮ່ວມໃຈສະໝານສະມັກຄີເປັນນ້ຳໜຶ່ງໃຈດຽວຈັດຕັ້ງປະຕິບັດພາລະບົດບາດ ແລະສິດໜ້າທີ່ຂອງຕົນໃນແຕ່ລະຂະແໜງການໃຫ້ເກີດປະສິດຕິຜົນແທ້ໆ.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວຍາມໃດກໍ່ຍຶດໝັ້ນເສັ້ນທາງກ້າວຂຶ້ນສັງຄົມນິຍົມເປັນຈຸດໝາຍປາຍທາງ ໃນການກໍ່ສ້າງເສດຖະກິດສັງຄົມ ແລະລະບອບການເມືອງຂອງຕົນ, ດັ່ງນັ້ນ, ຈຶ່ງເຫັນເປັນອັນຈະແຈ້ງແລ້ວວ່າມີພຽງແຕ່ ການຮີບຮ້ອນເອົາໃຈໃສ່ພັດທະນາກຳລັງການຜະລິດຈາກສັງຄົມກະເສດຕະກຳທີ່ອີງໃສ່ທຳມະຊາດ ແລະເຄິ່ງທຳມະຊາດ

ເພື່ອກ້າວໄປເປັນກຳລັງການຜະລິດທີ່ຂະຫຍາຍຕົວ, ມີວິທະຍາສາດເຕັກນິກ, ເຮັດໃຫ້ມີຜົນການຜະລິດສູງ, ມີຮູບແບບ ແລະລະບົບການຄຸ້ມຄອງການຜະລິດດີ ຈຶ່ງຈະເຮັດໃຫ້ລະດັບຊີວິດການເປັນຢູ່ ຂອງປວງຊົນທັງຊາດມີຄວາມອຸດົມສົມບູນ ແລະໃນທີ່ສຸດເປົ້າໝາຍອັນສູງສົ່ງຂອງພວກເຮົາຈຶ່ງຈະບັນລຸໄດ້.

ກອງສົ່ງເສີມກະສິກຳ ແລະປ່າໄມ້ ຊຶ່ງເປັນຫົວໜ່ວຍວິຊາການໜຶ່ງມີບົດບາດໃຫ້ບໍລິການວິຊາການ ແລະຈັດຕັ້ງນຳພາຊາວກະສິກອນເຮັດການຜະລິດກະສິກຳ ເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະຜະລິດໃຫ້ຫຼາຍກາຍເປັນສິນຄ້ານັບມື້ນັບຫຼາຍຂຶ້ນ, ດ້ວຍຈັ່ງຫວະການຂະຫຍາຍຕົວທີ່ໄວ ແລະມີຄວາມສອດຄ່ອງກັບທ່າແຮງທີ່ມີໃນແຕ່ລະທ້ອງຖິ່ນໃຫ້ມີຄວາມໜັກແໜ້ນ ແລະໝັ້ນຄົງຍາວນານ. ພາລະກິດອັນສູງສົ່ງນີ້ມັນໄດ້ຮຽກຮ້ອງໃຫ້ພະນັກງານ ແລະນັກສົ່ງເສີມໃນຂະແໜງການທຸກຄົນຕ້ອງກຳແໜ້ນແນວທາງປ່ຽນແປງໃໝ່ຮອບດ້ານຂອງພັກ, ອອກແຮງປະຕິບັດບົດບາດແລະໜ້າທີ່ຢ່າງຫ້າວຫັນເພື່ອຍູ້ແຮງໃຫ້ກຳລັງຜູ້ຜະລິດຕົວຈິງໃນຂອບເຂດທົ່ວປະເທດ ໄດ້ມີການຂະຫຍາຍຕົວ, ຢາກເຮັດໄດ້ແນວນັ້ນມີຄວາມຈຳເປັນຕ້ອງໄດ້ມີການຍົກສູງ ແລະປັບປຸງຄວາມຮູ້ຄວາມສາມາດໃນການຜະລິດກະສິກຳຂຶ້ນ, ນອກຈາກທີ່ກ່າວນັ້ນແລ້ວກໍ່ຍັງມີຄວາມຈຳເປັນຕ້ອງໄດ້ມີການປະສານສົມທົບລະຫວ່າງອົງການຈັດຕັ້ງລັດ, ເອກະຊົນແລະອົງການຈັດຕັ້ງສາກົນ ເພື່ອຮ່ວມກັນຊຸກຍູ້, ສົ່ງເສີມ ແລະຍູ້ແຮງຂະບວນການດັ່ງກ່າວໃຫ້ເປັນໄປຕາມທິດທາງນະໂຍບາຍການພັດທະນາສັງຄົມເສດຖະກິດຂອງພັກ / ລັດຖະບານ ທີ່ຍາມໃດກໍ່ເນັ້ນໃຫ້ເກີດການມີສ່ວນຮ່ວມຂອງທຸກພາກສ່ວນເສດຖະກິດ, ເພາະບາງບັນຫາໃນການພັດທະນາມັນເປັນສິ່ງທີ່

ຢ່າງທີ (5) ໃນລະດັບເນື້ອທີ່ປູກ ແລະຝູງສັດ ຕົວຈິງ: ຜົນການສົ່ງເສີມຕ້ອງເນັ້ນໃສ່ໃຫ້ຊາວກະສິກອນເຫັນໄດ້ປະສິດຕິຜົນໃນການຜະລິດພືດໃນຫົວໜ່ວຍເນື້ອທີ່ດິນທີ່ໃຊ້ປູກ, ຜະລິດຕະພາບຂອງສັດລ້ຽງໃນຫົວໜ່ວຍການລົງທຶນ ແລະຫົວໜ່ວຍເວລາທີ່ໃຊ້ລ້ຽງກ່າວຄື:

- ຄວນໃຊ້ຄວາມໜາແໜ້ນ (ຈຳນວນຕົ້ນ) ຂອງພືດລະດັບໃດ, ປັດໃຈນຳເຂົ້າສ່ຳໃດ ຈຶ່ງເຮັດໃຫ້ມີຜົນຜະລິດສູງໃນຫົວໜ່ວຍເນື້ອທີ່ໜຶ່ງໆ ກ້າວໄປສູ່ໄດ້ຜະລິດຕະພັນມີຄຸນນະພາບດີມີລາຄາສູງ
- ຄວນໃຊ້ຄວາມໜາແໜ້ນ (ຈຳນວນ) ໂຕສັດ, ປັດໃຈນຳເຂົ້າໃນລະດັບໃດຈຶ່ງເຮັດໃຫ້ມີຜົນຜະລິດສູງໃນຫົວໜ່ວຍເນື້ອທີ່ລ້ຽງໜຶ່ງໆ ກ້າວໄປສູ່ໄດ້ຜະລິດຕະພັນມີຄຸນນະພາບດີມີລາຄາສູງ
- ຊ່ວງໄລຍະເວລາໃດ ? ຄວນໃຊ້ເນື້ອທີ່ປູກ ແລະລ້ຽງຫຍັງ ?
- ເຕັກນິກ, ຂັ້ນຕອນການປູກ ແລະລ້ຽງແບບໃດ ?

  ⇒ ທີ່ສຳຄັນ ຫົວໜ່ວຍເນື້ອທີ່ປູກ ແລະລ້ຽງສັດນັ້ນໆ ຕ້ອງຊຸກຍູ້ໃຫ້ກາຍເປັນແຫຼ່ງສາທິດ ແລະຖອດຖອນບົດຮຽນໄດ້ສຳລັບຊາວກະສິກອນຄົນອື່ນໆ(ເປັນ Innovative farm) ນີ້ເປັນໜ້າທີ່ຂອງຜູ້ສົ່ງເສີມຕ້ອງເຮັດໃຫ້ໄດ້.

ທີ່ກ່າວມາທັງໝົດນັ້ນແມ່ນເປັນຂໍ້ຄິດເຫັນຈາກຄວາມເຂົ້າໃຈໃນວຽກງານສົ່ງເສີມກະສິກຳ ແລະປະສົບການທີ່ໄດ້ສະສົມມາເປັນສ່ວນບຸກຄົນ, ຫາກບໍ່ໄດ້ແມ່ນຫຼັກທິດສະດີທີ່ຢາກໃຫ້ຍຶດຖືຕາຍຕົວແຕ່ຢ່າງໃດ? ເພາະວ່າ "ວຽກເກີດຂື້ນໄດ້ຢູ່ທີ່ການສະແຫວງຫາ, ຜົນສຳເລັດກໍດນີຂື້ນມາຢູ່ທີ່ການໄດ້ລົງມືປະຕິບັດ"



ໃຫຍ່ເກີນກວ່າຄວາມສາມາດຂອງພາກສ່ວນໃດພາກສ່ວນໜຶ່ງທີ່ຈະແກ້ໄຂໄດ້ພຽງຝ່າຍດຽວ.

## 2. ບົດບາດ ແລະໜ້າທີ່ຂອງການສົ່ງເສີມກະສິກຳ

ຕໍ່ການພັດທະນາກຳລັງການຜະລິດໃນພາກກະເສດຕະກຳສາມາດເວົ້າໄດ້ວ່າ ທຸກພາກສ່ວນມີຄວາມສຳຄັນ ຊຶ່ງຄວາມເປັນຈິງກໍ່ເປັນເຊັ່ນນັ້ນ , ແຕ່ຢ່າງໃດກໍ່ດີ ບົນພື້ນຖານພາລະບົດບາດ ແລະຂອບເຂດສິດໜ້າທີ່ງໄດ້ຮັບມອບໝາຍເຫັນໄດ້ວ່າ ວຽກງານສົ່ງເສີມໃນກອງກໍ່ຄືໃນໜ່ວຍງານສົ່ງເສີມມີຄວາມຈຳເປັນຕ້ອງໄດ້ຍົກສູງ ແລະປັບປຸງແບບແຜນວິທີດຳເນີນວຽກງານໃຫ້ມີຄວາມສອດຄ່ອງກັບສະພາບຄວາມຕ້ອງການຕົວຈິງຂອງຊາວກະສິກອນ ກໍ່ຄືສະພາບການປ່ຽນແປງໃໝ່ຮອບດ້ານໃນທົ່ວສັງຄົມຂອງປະເທດໂດຍເລີ້ມຈາກການມີວິໃສທັດ, ກອບຄວາມຄິດໃນການຈັດຕັ້ງປະຕິບັດ ແລະແນວວິທີການປັບປຸງທີ່ແທດເໝາະກັບຄວາມເປັນຈິງ, ມີລັກສະນະວິທະຍາສາດເທົ່ານັ້ນຈຶ່ງຈະສາມາດຊ່ວຍເຫຼືອຊາວກະສິກອນບັນດາເຜົ່າໃຫ້ຫຼຸດພົ້ນອອກຈາກພາວະຄວາມບໍ່ຮູ້ ແລະຄວາມຫຼູ້າຫຼັງຍາກຈົນໃນການຜະລິດກະສິກຳ. ດັ່ງນັ້ນ, ກອບຄວາມຄິດໃນແນວວິທີດຳເນີນການປັບປຸງ ແລະຈັດຕັ້ງປະຕິບັດວຽກງານການສົ່ງເສີມຈຶ່ງຖືກກຳນົດອອກມີດັ່ງລຸ່ມນີ້:

## 2.1. ຄວາມເຂົ້າໃຈຕໍ່ເປົ້າໝາຍ ແລະໜ້າທີ່ຂອງການສົ່ງເສີມ

- ເປົ້າໝາຍຍາວນານຂອງວຽກງານການສົ່ງເສີມຄືເຮັດໃຫ້ຊາວກະສິກອນຜູ້ຜະລິດສາມາດກຳນົດຮູບແບບການຜະລິດຂອງຕົນ (ຄອບຄົວ) ຂອງຊຸມຊົນ ກໍ່ຄືຂອງກຸ່ມຜະລິດຂອງຕົນໄດ້ ສອດຄ່ອງແທດເໝາະກັບຊັບພະຍາກອນທີ່ມີ ແລະຮັບປະກັນປະສິດຕິຜົນສູງທີ່ສຸດ
- ເຮັດໃຫ້ເກີດມີຕາໜ່າງການຄຸ້ມຄອງປະສານງານໃນວຽກງານການສົ່ງເສີມໃນທົ່ວປະເທດມີຄວາມຄ່ອງຕົວຮັບປະກັນການຈັດຕັ້ງປະຕິບັດຕົວຈິງໄດ້ ແລະໝັ້ນຄົງຍາວນານ.

## 2.2. ໜ້າທີ່ສຳຄັນຂອງການສົ່ງເສີມ

ເພື່ອເຮັດໃຫ້ຄາດໝາຍທີ່ວາງໄວ້ນັ້ນມີຜົນທາງຮູບປະທຳ, ໃນສະເພາະໜ້າ, ວຽກງານການສົ່ງເສີມໃນກອງຄວນເລັ່ງໃສ່ຄື:

- ເຮັດໃຫ້ບຸກຄະລາກອນທີ່ເຮັດວຽກງານສົ່ງເສີມ ຝຶກອົບຮົມມີທັດສະນະອັນຖືກຕ້ອງ, ກຳໄດ້ເປົ້າໝາຍ ແລະໜ້າທີ່ຕົ້ນຕໍໃນການເຮັດວຽກງານການສົ່ງເສີມ ເພື່ອຮັບປະກັນໄດ້ການຈັດຕັ້ງຜັນຂະຫຍາຍແຜນງານ ແລະແນວທາງນະໂຍບາຍໃນວຽກງານການພັດທະນາກະສິກຳຂອງຂະແໜງການ ກະສິກຳ ແລະ ປ່າໄມ້ ຕາມວິໄສທັດຂອງລັດຖະບານ.
- ປັບປຸງແບບແຜນວິທີການຈັດຕັ້ງປະຕິບັດວຽກງານການສົ່ງເສີມຂອງພະນັກງານໃນທຸກລະດັບແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍຖືເອົາວຽກງານການຝຶກອົບຮົມສົມຄຽງຄູ່ໄປກັບການຊຸກຍູ້ສະໜັບສະໜູນ ແລະການສາທິດປະຕິບັດຕົວຈິງໄປພ້ອມນັ້ນເປັນອັນບຸກເບີກໃຫ້ແກ່ການພັດ





ຢ່າງທີ່ (4) ໃນລະດັບຄອບຄົວ; ບົນພື້ນຖານທຳມະຊາດຂອງການປະຕິບັດກິດຈະກຳສົ່ງເສີມຂອງພະນັກງານນອກຈາກການປະສານກັບກຸ່ມ ແລະທັງໝົດຊຸມຊົນແລ້ວ ແມ່ນຈະຕິດພັນກັບການເຂົ້າຫາຄອບຄົວຊາວກະສິກອນເປັນລາຍບຸກຄົນ ດັ່ງນັ້ນ: ຜົນການສົ່ງເສີມທີ່ຄວນໄດ້ຮັບໃນລະດັບຄອບຄົວແມ່ນຄວາມສາມາດຂອງຊາວກະສິກອນນັ້ນໆໃນການຈັດສັນຊັບພະຍາກອນທຳມະຊາດທີ່ມີຢູ່ຂອງຕົນ, ແຮງງານ, ເວລາ, ອຸປະກອນເຄື່ອງມື ແລະທຶນເຂົ້າສູ່ການຜະລິດຢ່າງມີປະສິດຕິຜົນ, ຮັບປະກັນການມີລາຍຮັບ ແລະຄວາມຢູ່ລອດຂອງຄອບຄົວ ສຳລັບກຸ່ມຄອບຄົວທີ່ທຸກຍາກ. ຖ້າເປັນຄອບຄົວທີ່ມີຖານະພໍກຸ້ມກິນກໍ່ເນັ້ນໃສ່ໃຫ້ເກີດມີການສະສົມທຶນຂຶ້ນ, ຖ້າເປັນຄອບຄົວທີ່ມີຖານະດີແລ້ວກໍ່ເນັ້ນໃສ່ ໃຫ້ເກີດມີການລົງທຶນທົດສອບການນຳໃຊ້ເຕັກໂນໂລຢີອັນໃໝ່ເພື່ອການບຸກເບີກ ນຳລ່ອງໃຫ້ແກ່ກຸ່ມຄອບຄົວອື່ນ ຫຼືຊຸກຍູ້ ໃຫ້ເກີດການລົງທຶນເພື່ອຂະຫຍາຍຕາໜ່າງການຕະຫຼາດຜະລິດຕະພັນກະສິກຳຂອງຊຸມຊົນນັ້ນໆ. ທີ່ສຳຄັນຕ້ອງໃຫ້ມີຄອບຄົວຕົວແທນຈາກແຕ່ລະກຸ່ມຄອບຄົວ ທີ່ມີຖານະທາງເສດຖະກິດຕ່າງກັນນັ້ນ ເພື່ອສືບຕໍ່ຊຸກຍູ້ສົ່ງເສີມໃຫ້ກາຍເປັນຄອບຄົວຕົວແບບ ແລະວິຊາການປະຈຳບ້ານຢ່າງຍາວນານເຮັດໄດ້ຢ່າງນັ້ນ ຈຶ່ງຈະເປັນການຢັ້ງຢືນໄດ້ເຖິງຄວາມເຂົ້າໃຈອັນເລິກເຊິ່ງຂະແໜງ ການສົ່ງເສີມ ກະສິກຳ ແລະປ່າໄມ້ ພວກເຮົາໃນການຜັນຂະຫຍາຍແນວທາງການພັດທະນາເສດຖະກິດຂອງພັກ ທີ່ເນັ້ນໃສ່ການສ້າງ ແລະນຳໃຊ້ທຸກທ່າແຮງສັງຮວມຂອງສັງຄົມເຂົ້າສູ່ການພັດທະນາເສດຖະກິດໃຫ້ເກີດຜົນຢ່າງເປັນຮູບປະທຳຂຶ້ນເປັນກ້າວໆ.

ຈາກຖານຂໍ້ມູນຂ້າງເທິງນີ້ຈຶ່ງຈະສາມາດພະຍາກອນ, ສາມາດກຳນົດຂໍ້ແນະນຳທາງເຕັກນິກການຜະລິດ, ການນຳໃຊ້ປັດໃຈການຜະລິດ ແລະການບຳລຸງຮັກສາ ແລະການຕະຫຼາດຕ່າງໆໄດ້,

ຢ່າງທີ (2) ເພື່ອເຮັດໃຫ້ຄຳສັ່ງ 01 ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງເປັນຮູບປະທຳ ແລະໜັກແໜ້ນໃນວຽກງານການສົ່ງເສີມກະສິກຳ ການປັບປຸງຮູບແບບການປະສານສົມທົບ ແລະກົນໄກທີ່ກ່ຽວຂ້ອງເພື່ອເອື້ອອຳນວຍໃຫ້ການປະຕິບັດວຽກສົ່ງເສີມດີ ແລະຄ່ອງຕົວຂຶ້ນຖືກຕາມພາລະບົດບາດຕາມດຳລັດ 01 ນັ້ນຄວນເນັ້ນໜັກໃສ່ການປັບປຸງແບບແຜນການຈັດຕັ້ງຄຸ້ມຄອງວຽກງານສົ່ງເສີມກະສິກຳຂອງຫ້ອງການກະສິກຳເມືອງເປັນຈຸດຕົ້ນຕໍເຮັດແນວໃດໃຫ້ວຽກສົ່ງເສີມກະສິກຳ ໄດ້ກາຍເປັນໜ້າວຽກບຸລິມະສິດທີ່ທຸກຝ່າຍຕ້ອງໄດ້ສຸມໃສ່ປະຕິບັດເຮັດໃຫ້ເມືອງມີຂີດຄວາມສາມາດໃນການປະຕິບັດກັບບ້ານຢ່າງຄ່ອງຕົວ, ເຊັ່ນ: ພະນັກງານປະຈຳຫ້ອງການກະສິກຳ ແລະປ່າໄມ້ ໄດ້ເຮັດໜ້າທີ່ການສົ່ງເສີມເປັນຕົ້ນຕໍ, ມີຮູບແບບການຈັດຕັ້ງແບ່ງງານຢ່າງຊັດເຈນ, ມີການກຳນົດຄວາມຮັບຜິດຊອບ ແລະບໍລິມາດວຽກໃນແຕ່ລະລະດູການຜະລິດ, ມີແບບແຜນວິທີປະຕິບັດວຽກຢ່າງມີລະບົບພ້ອມທັງມີເງື່ອນໄຂເອື້ອອຳນວຍການປະຕິບັດ.

ຢ່າງທີ (3) ໃນລະດັບຊຸມຊົນ, ບໍ່ມີສິ່ງໃດຈະສຳຄັນໄປກວ່າການເຮັດໃຫ້ບ້ານມີໜ່ວຍເສນາທິການທາງເສດຖະກິດຂອງບ້ານເຊັ່ນ: ມີການຈັດຕັ້ງເປັນກຸ່ມການຜະລິດຕ່າງໆ, ມີລູກບ້ານ (ຫຼືຊາວກະສິກອນ) ທີ່ມີຄວາມຮູ້ ແລະສຳນິສຳນານໃນການຜະລິດໂດຍໄດ້ຮັບການບຳລຸງສ້າງໃຫ້ກາຍເປັນວິຊາການປະຈຳບ້ານໃນແຕ່ລະດ້ານ ແລະສາມາດຖ່າຍທອດຄວາມຮູ້ຕ່າງໆ ໃຫ້ຄອບຄົວອື່ນໄດ້.



ທະນາການຜະລິດກະສິກຳຕົວຈິງໃນພື້ນຖານການຜະລິດ.

- ເພີ່ມຄວາມຮູ້, ຄວາມສາມາດທີ່ເປັນພື້ນຖານໃນວຽກງານການຝຶກອົບຮົມ (ຖ່າຍທອດເຕັກໂນໂລຢີ) ການຕິດຕາມຊຸກຍູ້ ແລະ ການຈັດຕັ້ງຜັນຂະຫຍາຍບົດຮຽນໃຫ້ແກ່ພະນັກງານກະສິກຳທີ່ກ່ຽວຂ້ອງ.
- ຍູ້ແຮງ ແລະປະສານສົມທົບຢ່າງໃກ້ຊິດກັບການພັດທະນາວິຊາການສະເພາະດ້ານເພື່ອເປັນສູນລວມໃນການຜັນຂະຫຍາຍເຕັກໂນໂລຢີໃໝ່ເຂົ້າສູ່ຂະບວນການຜະລິດຕົວຈິງ
- ປັບປຸງກົນໄກການຄຸ້ມຄອງວຽກງານການຝຶກອົບຮົມການສົ່ງເສີມກະສິກຳໃນຂະແໜງການ (ແຕ່ສູນກາງ_ແຂວງ_ເມືອງ_ບ້ານ)
- ປັບປຸງ ແລະຂະຫຍາຍລະບົບຂໍ້ມູນຂ່າວສານ, ສື່ໃນການສົ່ງເສີມກະສິກຳ ແລະວຽກງານໂຄສະນາເຜີຍແຜ່ໃຫ້ມີບາດກ້າວຂະຫຍາຍຕົວທີ່ໄວ
- ຊຸກຍູ້ຊາວກະສິກອນໃຫ້ມີການຈັດຕັ້ງ ໃນການຂະຫຍາຍ ແລະຄຸ້ມຄອງການຜະລິດກະສິກຳຕ່າງໆ (ໃຫ້ມີກຸ່ມຜະລິດ) ທີ່ມີຄວາມເຂັ້ມແຂງ, ສ້າງ ແລະຂະຫຍາຍວິຊາການບ້ານໃນແຕ່ລະດ້ານໃຫ້ກ້ວາງຂວາງໃນຈັ່ງຫວະທີ່ໄວ
- ຊຸກຍູ້ເອື້ອອຳນວຍໃຫ້ເກີດມີຕະຫຼາດປັດໃຈການຜະລິດ, ຫົວໜ່ວຍເກັບຊື້/ປຸງແຕ່ງ ແລະ ຈຳໜ່າຍຜະລິດຕະພັນ

## 2.3. ອົງປະກອບສຳຄັນຂອງວຽກງານສົ່ງເສີມທີ່ຄວນເອົາໃຈໃສ່ປັບປຸງ

ໃນຄວາມເປັນຈິງວຽກງານການສົ່ງເສີມ ຖ້າເບິ່ງໃນທາງເລິກ ແລະທາງກວ້າງຈະເຫັນໄດ້ວ່າມີຄວາມສຳຄັນຕໍ່ການພັດທະນາກະສິກຳ ແລະປ່າໄມ້ຂອງຂະແໜງການທີ່ສຸດ, ເພາະເປັນວຽກງານກ່ຽວຂ້ອງກັບການເຮັດໃຫ້ຊາວກະສິກອນມີທາງເລືອກ ໃນການຕັດສິນໃຈກຳນົດວິທີການຜະລິດຫຼາຍຂຶ້ນ, ຊຶ່ງຈະສົ່ງຜົນສະທ້ອນໄປເຖິງການເຮັດໃຫ້ຖານະຄວາມເປັນຢູ່ທາງເສດຖະກິດຂອງຄອບຄົວຊາວກະສິກອນດີຂຶ້ນ, ນອກນັ້ນກໍ່ຍັງເປັນສິ່ງ ກ່ຽວພັນກັບຜົນໄດ້ຜົນເສຍຂອງຜົນຜະລິດກະສິກຳຕະຫຼອດຮອດຜົນລວມຂອງເສດຖະກິດແຫ່ງຊາດ. ດ້ວຍປະການດັ່ງກ່າວ, ການເຫັນໄດ້ຄວາມສຳຄັນທີ່ຕ້ອງໄດ້ປັບປຸງບັນດາອົງປະກອບສຳຄັນຂອງວຽກງານສົ່ງເສີມກະສິກຳ ຈຶ່ງເຫັນວ່າຄວນເນັ້ນໜັກໃສ່ສິ່ງທີ່ຈະໄດ້ກ່າວລຸ່ມນີ້:

- ອົງປະກອບທີ 1 ຂອງການສົ່ງເສີມແມ່ນ<u>ພະນັກງານທີ່ເຮັດວຽກສົ່ງເສີມ</u> (ນັກສົ່ງເສີມ/ພັດທະນາ)
- ອົງປະກອບທີ 2 ຂອງການສົ່ງເສີມ ແມ່ນ<u>ຕົວເຕັກໂນໂລຢີ</u> ແລະປັດໃຈຊຸກຍູ້ຕ່າງໆ
- ອົງປະກອບທີ 3 ຂອງການສົ່ງເສີມ ແມ່ນ <u>ຊາວກະສິກອນຜູ້ຜະລິດ</u>
- ອົງປະກອບທີ4 ແມ່ນລະບົບການຈັດຕັ້ງຄຸ້ມຄອງວຽກງານການສົ່ງເສີມ / ຝຶກອົບຮົມພ້ອມທັງເງື່ອນໄຂ ແລະເຄື່ອງມືໃນການຖ່າຍທອດເຕັກໂນໂລຢີ



ໂນໂລຢີ ເພື່ອຖອດຖອນບົດຮຽນໄດ້ວ່າສິ່ງໃດດີ ແລະອ່ອນຈາກການໄດ້ນຳໃຊ້ ແລະໃຫ້ສາມາດປະເມີນຕົວເຕັກໂນໂລຢີໄດ້ດ້ວຍ.

ສະເພາະວຽກງານສົ່ງເສີມທີ່ມີລັກສະນະຍຸດທະສາດ ແລະເຄື່ອງມືມະຫາພາກໃນການວາງແຜນ ຕ້ອງໄດ້ຈັດຕັ້ງປັບປຸງໃຫ້ເກີດຂຶ້ນໃນກອງ.

ຢ່າງທີ (1) ແມ່ນຕ້ອງສູ້ຊົນພັດທະນາ ແລະປັບປຸງຖານຂໍ້ມູນທີ່ກ່ຽວຂ້ອງກັບການກຳນົດຮູບແບບການສົ່ງເສີມ, ສິ່ງທີ່ຕ້ອງໄປສົ່ງເສີມ, ທັງນີ້ແມ່ນເພື່ອພັດທະນາປັບປຸງລະບົບຖານຂໍ້ມູນເພື່ອເປັນເຄື່ອງມືໃນການກຳນົດຮູບແບບການສົ່ງເສີມຂຶ້ນໃຫ້ໄດ້ໃນລະດັບພື້ນຖານເຊັ່ນ:

- ສ້າງຫຼືຊຸກຍູ້ໃຫ້ມີແຜນທີ່ເຂດການຜະລິດຂອງແຕ່ລະເມືອງ, ແຂວງ ແລະບ້ານທີ່ເຂົ້າໄປສົ່ງເສີມໄດ້ງ່າຍເຊັ່ນເຂດທົ່ງພຽງຈຸດສຸມລັດຖະບານ ແລະບັນດາແຂວງທີ່ສາມາດເກັບກຳໄດ້ງ່າຍ. ສ່ວນເຂດທີ່ຍາກ ແລະຫ່າງໄກສອກຫຼີກ ແມ່ນຄ່ອຍໆ ພັດທະນາຕາມຫຼັງ
- ບັນຊີລາຍຊື່ພືດປູກ, ສັດລ້ຽງຕົ້ນຕໍໃນແຕ່ລະເຂດມີອັນໃດແດ່ ໃນຮອບປີ ແລະຮອບລະດູການໜຶ່ງ
- ການໄຫຼວຽນຂອງຜົນຜະລິດເປັນຢ່າງໃດ, ລາຍໄດ້ຈາກຜົນຜະລິດເຫຼົ່ານັ້ນມີແນວໃດ
- ບັນຫາທີ່ມັກເກີດກັບພືດປູກ, ສັດລ້ຽງ ແລະວິທີການແກ້ໄຂຂອງຊາວກະສິກອນເປັນຢ່າງໃດ
- ທ່າແຮງ ແລະຂໍ້ຈຳກັດໃນການຜະລິດ ແລະຂະຫຍາຍກ້ວາງ ຫຼືການລົງທຶນເຂົ້າໃສ່ການພັດທະນາກະສິກຳມີຢ່າງໃດ

- ກຳແໜ້ນຕົວເລກສູ້ຊົນມະຫາພາກຂອງແຂວງ, ເມືອງ ແລະບ້ານ ຫຼືແຕ່ລະໂຄງການຜະລິດ
- ເບິ່ງທ່າແຮງ ແລະຄວາມອາດສາມາດໃນການນຳໃຊ້ເນື້ອທີ່ປູກ ແລະ ລ້ຽງຕົວຈິງໂດຍວິເຄາະໃຫ້ລະອຽດເພື່ອເຫັນໄດ້ຜົນກະທົບ ແລະຄວາມສ່ຽງໃນທຸກດ້ານອາດຈະເກີດຂື້ນໄດ້
- ກຳໄດ້ຄວາມຕ້ອງການ ແລະບັນຫາຂອງຊາວກະສິກອນຜູ້ຜະລິດຕົວຈິງມີຢ່າງໃດ (ຢາກເຮັດຫຍັງໃນການຜະລິດກະສິກຳ) ບາງບັນຫາທີ່ຊາວກະສິກອນມີອາດບໍ່ກ່ຽວຂ້ອງກັບວຽກງານການສົ່ງເສີມກະສິກຳ ຊຶ່ງຈຳເປັນຕ້ອງໄດ້ໃຫ້ຄວາມກະຈ່າງແຈ້ງແກ່ເຂົາເຈົ້າ
- ກຳແໜ້ນອັດຕາສ່ວນຂອງຊາວກະສິກອນ ທີ່ມີຄວາມແຕກຕ່າງທາງຖານະເສດຖະກິດເພື່ອກ້າວເຂົ້າສູ່ການນຳໃຊ້ເຕັກໂນໂລຢີອັນໃໝ່
- ນຳສະເໜີເຕັກໂນໂລຢີ ແລະກຳມະວິທີໃນການນຳໃຊ້ຕະຫຼອດຮອດຜົນທີ່ຄາດຈະໄດ້ຮັບເພື່ອໃຫ້ຊາວກະສິກອນເກີດຄວາມສົນໃຈ

⇒ ການນຳສະເໜີເຕັກໂນໂລຢີ ແລະກຳມະວິທີໃນການນຳໃຊ້ບໍ່ຄວນເປັນໃນລັກສະນະທີ່ເປັນຟອມເອກະພາບວ່າທົ່ວທັງຂຸມຊົນ, ແຂວງ, ເມືອງ ຫຼືບ້ານຕ້ອງນຳໃຊ້ຄືກັນ. ຕ້ອງເບິ່ງ ແລະສົມທຽບວ່າເຕັກໂນໂລຢີທີ່ເຂົາເຈົ້ານຳໃຊ້ຢູ່ກັບອັນໃໝ່ແຕກຕ່າງກັນຢ່າງໃດ, ມີຄວາມສ່ຽງຫຼາຍນ້ອຍພຽງໃດ? ແຕ່ລະເຕັກໂນໂລຢີ

⇒ ເຕັກໂນໂລຢີທີ່ນຳໄປສະເໜີໃຫ້ຊາວກະສິກອນນຳໃຊ້ຕ້ອງໃຫ້ແທດເໝາະກັບຄວາມອາດສາມາດໃນການລົງທຶນຂອງຊາວກະສິກອນ ແລະຕ້ອງໃຫ້ມີທ່າອ່ຽງຂະຫຍາຍໄດ້ໃນວົງກ້ວາງ ແລະຍາວນານ.

- ຄວນໄດ້ມີການສະໜັບສະໜູນໃຫ້ຊາວກະສິກອນໄດ້ນຳໃຊ້ບົດຮຽນໃໝ່ເຂົ້າໃນການຜະລິດຕົວຈິງ ແລະມີການຕິດຕາມປະເມີນການນຳໃຊ້ເຕັກ








ຮູບ.1. ແຜ່ນວາດສະແດງຄວາມສຳພັນ ຂອງວຽກງານການສົ່ງເສີມທີ່ດີ

ໃນສະພາບຄວາມເປັນຈິງ ຂະແໜງການພວກເຮົາແມ່ນຍັງຂາດພະນັກງານທີ່ມີລະດັບຄວາມສາມາດ ໃນການເຮັດວຽກງານສົ່ງເສີມທີ່ມີສີມືແທ້ງ, ນອກຈາກນັ້ນທີ່ສຳຄັນກໍ່ແມ່ນຍັງຂາດຮູບແບບ/ວິທີການຄຸ້ມຄອງປະສານງານໃນວຽກງານດັ່ງກ່າວ ທີ່ຮັບປະກັນໃຫ້ມີການລວມສູນ, ປະຫຍັດໄດ້ທັງຄົນ ແລະງົບປະມານ ແລະພ້ອມທັງຮັບປະກັນການປະຕິບັດທີ່ມີຈຸດສຸມອັນດຽວຂອງທົ່ວຂະແໜງການກະສິກຳ ແລະປ່າໄມ້ ໃນເລື້ອງທີ່ສາມາດປະຕິບັດໄດ້. ດັ່ງນັ້ນ, ຈິ່ງມີຄວາມຈຳເປັນຕ້ອງເຮັດໃຫ້ມີການປັບປຸງ ແລະພັດທະນາອົງປະກອບຂອງການສົ່ງເສີມທີ່ໄດ້ກ່າວຂ້າງເທິງນີ້ເຊັ່ນ: ຕ້ອງແມ່ນການສ້າງໃຫ້

- ພະນັກງານກະສິກຳກາຍເປັນນັກຝຶກອົບຮົມ / ນັກສົ່ງເສີມຫຼືນັກພັດທະນາ
- ເຕັກໂນໂລຢີທີ່ສັບສົນກາຍເປັນເຕັກໂນໂລຢີທີ່ເຂົ້າໃຈງ່າຍແລະນຳໃຊ້ໄດ້
- ການຍັງຂາດລະບົບ, ວິທີການໄດ້ມີຮູບແບບ, ວິທີການ ແລະເຕັກນິກໃນການຖ່າຍທອດທີ່ເຂົ້າໃຈແລະຮຽນຮູ້ໄດ້ງ່າຍສຳລັບຊາວກະສິກອນ

ຊາວກະສິກອນແມ່ນກຸ່ມເປົ້າໝາຍສຳຄັນທີ່ວຽກສົ່ງເສີມຕ້ອງເຂົ້າໄປເຖິງ. ການນຳເອົາວຽກສົ່ງເສີມເຂົ້າໄປຫາຊາວກະສິກອນ ແມ່ນຕ້ອງເນັ້ນໃຫ້ຊາວກະສິກອນກາຍເປັນຜູ້ຜະລິດເກັ່ງ ແລະມີການຈັດຕັ້ງແໜ້ນໜາ. ແຕ່ຢ່າງໃດກໍ່ດີການຈັດຕັ້ງປະຕິບັດເພື່ອໃຫ້ວຽກງານສົ່ງເສີມເຂົ້າສູ່ຊາວກະສິກອນໄດ້ທົ່ວເຖິງບາດດຽວນັ້ນແມ່ນເຮັດໄດ້ຍາກ, ເພາະກຳລັງບຸກຄະລາກອນ (ພະນັກງານສົ່ງເສີມ / ນັກຝຶກອົບຮົມ) ຂອງພວກເຮົາທີ່ເຮັດວຽກງານການສົ່ງເສີມກະສິກຳໃນຕົວຈິງແມ່ນບໍ່ສາມາດໄປເຮັດໄດ້ກັບທຸກຄອບຄົວຊາວກະສິກອນຜູ້ຜະລິດຕົວຈິງ. ດັ່ງນັ້ນ, ການຈັດຕັ້ງຊາວກະສິກອນໃຫ້





- ຊາວກະສິກອນມີຖານະທາງເສດຖະກິດແຕກຕ່າງກັນ ຍ່ອມມີຜົນກະທົບຕໍ່ການຕັດສິນໃຈເລືອກໃຊ້ ເຕັກໂນໂລຢີໃນລະດັບທີ່ແຕກຕ່າງກັນ
- ການກຳນົດເປົ້າໝາຍ / ຈຸດປະສົງໃນການຜະລິດກະສິກຳ ຂອງຊາວກະສິກອນທີ່ມີຖານະທາງເສດຖະກິດຕ່າງກັນ ຍ່ອມມີຄວາມແຕກຕ່າງກັນທັງໃນດ້ານຂອບເຂດ ແລະການໃຫ້ຄວາມສຳຄັນຕໍ່ກິດຈະກຳການຜະລິດ ແລະກຳມະວິທີປະຕິບັດ.
- ສະພາບພູມີປະເທດ, ທີ່ຕັ້ງ, ພູມສັນຖານຂອງພື້ນທີ່ການຜະລິດແຕກຕ່າງກັນຊາວກະສິກອນຍ່ອມມີການກຳນົດຮູບແບບການຜະລິດຕ່າງກັນ
- ວັດທະນະທຳຮີດຄອງປະເພນີ ແລະບົດຮຽນທີ່ສະສົມມີຄວາມແຕກຕ່າງ, ການດຳເນີນການຜະລິດ ແລະຮູບແບບການຜະລິດຍ່ອມແຕກຕ່າງກັນ
- ປັດໃຈ ແລະເງື່ອນໄຂກະທົບຈາກພາຍນອກຕໍ່ຄອບຄົວມີລະດັບແຕກຕ່າງກັນການປັບຕົວປ່ຽນແປງຮູບແບບການຜະລິດຂອງຊາວກະສິກອນຍ່ອມແຕກຕ່າງກັນ

ດັ່ງນັ້ນ, ການກຳນົດຮູບແບບການສົ່ງເສີມກະສິກຳ ຄວນເປັນໄປໃນທິດທາງ ແລະວິທີການຢ່າງໃດ? ຈຶ່ງຈະແທດເໝາະກັບຄວາມເປັນຈິງຂອງສັງຄົມກະເສດຕະກຳທີ່ມີຄວາມແຕກຕ່າງຫຼາກຫຼາຍດັ່ງທີ່ກ່າວມານັ້ນ.

ເພື່ອໃຫ້ຮູບແບບການສົ່ງເສີມມີຄວາມສອດຄ່ອງກັບສະພາບຄວາມຕ້ອງການ ແລະພາລະບົດບາດຂອງວຽກງານສົ່ງເສີມ ທາງອອກໃນການກຳນົດຮູບແບບການສົ່ງເສີມຄວນນອນໃນ:

- ການຝຶກອົບຮົມພາຍໃນກອງ: ສ້າງນັກຝຶກໃນກອງເອງໃຫ້ຮູ້ຈັກຕົວເຕັກໂນໂລຢີດີ ແລະຮູ້ວິທີຖ່າຍທອດທີ່ດີ
- ສ້າງນັກສົ່ງເສີມຂັ້ນແຂວງ
- ສ້າງນັກສົ່ງເສີມຂັ້ນເມືອງ
- ສ້າງຊາວກະສິກອນເປົ້າໝາຍ (ຄອບຄົວຕົວແບບ / ວິຊາການບ້ານ ແລະການຄຸ້ມຄອງກິດຈະກຳກຸ່ມຕະຫຼອດຮອດສະມາຊິກກຸ່ມ)
- ຍູ້ໜູນໃຫ້ເກີດການປັບປຸງລະບົບການປະສານສົມທົບໃນວຽກງານດັ່ງກ່າວໃຫ້ມີຄວາມສອດຄ່ອງ ແລະປະຕິບັດຕົວຈິງໄດ້.

## 2.4. ການກຳນົດຮູບແບບການສົ່ງເສີມກະສິກຳ

ຄວາມເປັນຈິງຂອງສະພາບການຜະລິດກະສິກຳໃນສປປລາວ ຊາວກະສິກອນມີຄວາມຫຼາກຫຼາຍແຕກຕ່າງກັນ ໃນເລື້ອງຮູບແບບການຜະລິດຂອງຄອບຄົວ, ທັງນີ້ກໍ່ເນື່ອງຈາກສະພາບພູມສັນຖານ, ດິນຟ້າອາກາດຂອງທ້ອງຖິ່ນ, ຄວາມຊຶ້ນເຄີຍ, ຊັບພະຍາກອນ / ເຄື່ອງມືການຜະລິດ / ທຶນທີ່ມີ ແລະບົດຮຽນທີ່ສະສົມມາແຕ່ອາດີດ.

ນອກຈາກນັ້ນເມື່ອມີສະພາບການປ່ຽນແປງ ຂອງລະບົບເສດຖະກິດ_ສັງຄົມຈະຢູ່ໃນລະດັບໃດກໍ່ຕາມມັນໄດ້ເຮັດໃຫ້ຊາວກະສິກອນເກີດມີການປັບຕົວຢ່າງງຽບໆພາຍໃນຊຸມຊົນຊົນນະບົດທີ່ເຮັດການຜະລິດກະສິກຳ, ຊຶ່ງບາງເລື້ອງພະນັກງານສົ່ງເສີມອາດບໍ່ສາມາດວິເຄາະວິໄຈໄດ້ເຖິງວິທີການປັບຕົວຂອງຊາວກະສິກອນ. ດັ່ງນັ້ນ, ການກຳນົດຮູບແບບການສົ່ງເສີມ ຫຼືພັດທະນາກຳລັງການຜະລິດ ຈຶ່ງຄວນເກີດຂຶ້ນບົນພື້ນຖານວິໄສທັດ:



ເປັນກຸ່ມການຜະລິດ ທີ່ເລີ້ມຈາກນ້ອຍໄປຫາໃຫຍ່ກ່າວຄືເລີ້ມກໍ່ຕັ້ງກຸ່ມແບບທຳມະຊາດ_ຫຼາຍຄອບຄົວລວມຕົວກັນ ເພື່ອພ້ອມກັນວາງແຜນນຳໃຊ້ ແລະຈັດການຊັບພະຍາກອນຂອງຕົນໃຫ້ດີແລ້ວຈຶ່ງກ້າວໄປສູ່ການຈັດຕັ້ງເປັນກຸ່ມນິຕິບຸກຄົນ ໃນເວລາທີ່ກຸ່ມເຂັ້ມແຂງ.

ທີ່ກ່າວຂ້າງເທິງນັ້ນໝາຍຄວາມວ່າການເຂົ້າໄປສົ່ງເສີມຕ້ອງມີຄາດໝາຍທີ່ຊັດເຈນເຊັ່ນ:

- ເຮັດໃຫ້ເກີດມີກຸ່ມ_ມີການຈັດຕັ້ງຮ່ວມກັນຄຸ້ມຄອງກິດຈະການຜະລິດພາຍໃນບ້ານ
- ເຮັດໃຫ້ພາຍໃນກຸ່ມກໍ່ຄືພາຍໃນຊຸມຊົນນັ້ນໆມີວິຊາການເປັນຂອງຕົນເອງ_ສ້າງໃຫ້ມີວິຊາການປະຈຳກຸ່ມ (ບ້ານ) ເພື່ອເປັນຕົວແທນໃນການໃຫ້ບໍລິການແກ່ປະຊາຊົນພາຍໃນບ້ານ
- ຊຸກຍູ້ເຮັດໃຫ້ມີກິດຈະກຳທີ່ສາມາຊິກກຸ່ມຕ້ອງໄດ້ປະຕິບັດ ແລະຮ່ວມກັນຮັບຜິດຊອບ
- ໃຫ້ເຫັນໄດ້ຜົນປະໂຫຍດທີ່ຈະເກີດຂຶ້ນຕໍ່ແຕ່ລະຄອບຄົວ, ຕໍ່ກຸ່ມ ແລະຕໍ່ສ່ວນລວມທັງໃນໄລຍະສັ້ນ ແລະໄລຍະຍາວ
- ມີລະບົບແບບແຜນ ແລະວິທີການຈັດຕັ້ງປະຕິບັດຕົວຈິງຢ່າງຄົບວົງຈອນຕາມຫຼັກການໃນການຈັດການບໍລິຫານ




ວິທີການປັບປຸງພັດທະນາ ເພື່ອໃຫ້ເກີດການປ່ຽນແປງດັ່ງເປົ້າໝາຍກ່າວໄວ້ນັ້ນມາດຕາການໃນການປະຕິບັດຄວນຖືເອົາວຽກຝຶກອົບຮົມ, ສົນທະນາແລກປ່ຽນຄວາມຄິດຄວາມເຫັນຈາກປະສົບການ ແລະຄວາມຮູ້ຕົວຈິງທີ່ມີຢູ່ແລ້ວຫາຊ່ອງທາງແກ້ໄຂບົນພື້ນຖານຫຼັກການທາງວິຊາການທີ່ກ່ຽວຂ້ອງຮ່ວມກັນ ແລະນຳໄປປະຕິບັດ ໂດຍມີການຕີລາຄາຖອດຖອນບົດຮຽນເປັນ ສິ່ງບຸກເບີກໃຫ້ແກ່ການປ່ຽນແປງພຶດຕິກຳ ຫຼືແບບແຜນການຜະລິດຕົວຈິງຂອງຊາວກະສິກອນໝາຍວ່າ (ຝຶກ_ໄປປະຕິບັດຕົວຈິງ_ຖອດຖອນບົດຮຽນ _ຜັນຂະຫຍາຍ / ປັບປຸງ)

- ໃຫ້ການຝຶກອົບຮົມເພື່ອເພີ່ມຄວາມຮູ້ຄວາມສາມາດທີ່ເປັນລະບົບໃຫ້ນັກສົ່ງເສີມ
- ໃຫ້ໂອກາດໄດ້ນຳໃຊ້ບົດຮຽນເຂົ້າໃນການຊຸກຍູ້ສົ່ງເສີມຊາວກະສິກອນຕົວຈິງ
- ໃຫ້ໄດ້ມີການປຶກສາຫາລືຖອດຖອນບົດຮຽນລະຫວ່າງນັກສົ່ງເສີມ ແລະຊາວກະສິກອນ ແລະລະຫວ່າງນັກສົ່ງເສີມດ້ວຍກັນເອງ
- ສ້າງໂອກາດໃຫ້ໄດ້ມີການຜັນຂະຫຍາຍບົດຮຽນທີ່ດີ ແລະປັບປຸງສິ່ງທີ່ຄົງຄ້າງ

ຍຸດທະສາດການຝຶກອົບຮົມ ໃນນີ້ແມ່ນຕ້ອງເນັ້ນໜັກໃສ່ການສ້າງຄວາມເຂັ້ມແຂງ ແລະເປັນເຈົ້າການຂອງທ້ອງຖິ່ນເຊັ່ນ: ພະນັກງານສົ່ງເສີມເມືອງ, ບ້ານ. ດັ່ງນັ້ນ, ການຝຶກອົບຮົມຈຶ່ງມີຂອບເຂດຄວນປະຕິບັດຢູ່.